ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 24 ຫາ 28 ມີນາ 2025




ກອງປະຊຸມສະຫຼຸບວຽກງານ ຂອງ 2 ໂຄງການໃນ 4 ແຂວງພາກເໜືອ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ກອງປະຊຸມສະຫຼຸບວຽກງານ ຂອງ 2 ໂຄງການໃນ 4 ແຂວງພາກເໜືອ

ພາບ-ຂ່າວໂດຍ: ພະແນກ ໂຄສະນາ ແລະ ຂ່າວສານ

ກອງປະຊຸມສະຫຼຸບວຽກງານ ຂອງຄະນະຊີ້ນຳ ໂຄງການພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະການຄຸ້ມຄອງອ່າງໂຕ່ງແບບຍືນຍົງ ແລະ ໂຄງການຊົນລະກະເສດ ການຜະລິດສິນຄ້າຂະໜາດ ນ້ອຍຂັ້ນສູນກາງ ປະຈຳປີ 2024 ແລະວາງທິດທາງ ແຜນການປີ 2025 ໃນ 4 ແຂວງພາກເໜືອ ໄດ້ ຈັດຂຶ້ນ ຢູ່ແຂວງຫລວງພະບາງ ໃນວັນທີ 12 ມີນາ 2025 ນີ້, ໂດຍການເປັນປະທານຂອງ ທ່ານ ປອ ລິນຄຳ ດວງສະຫວັນ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້, ໂດຍມີທ່ານ ນາງ ສີລິພອນ ສຸພັນທອງ ຮອງເຈົ້າແຂວງຫລວງພະບາງ, ພ້ອມດ້ວຍ ບັນດາຮອງເຈົ້າແຂວງ, ຜູ້ປະສານງານຂັ້ນແຂວງ ແລະຂັ້ນເມືອງ ເຂົ້າຮ່ວມ. ການຈັດຕັ້ງປະຕິບັດທັງ 02 ໂຄງການໃນໄລຍະຜ່ານມາ ເປັນການປະກອບ ສ່ວນ ເຂົ້າໃນນະໂຍບາຍການລຶບລ້າງຄວາມ ທຸກຍາກຂອງລັດຖະບານ ແລະການປະຕິບັດແຜນ ງານ ໃນແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີ, ປະກອບມີ: ແຜນງານຄ້ຳ ປະກັນສະບຽງອາຫານ; ແຜນງານຜະລິດ ກະສິກຳ ເປັນສິນຄ້າ, ແຜນງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໂດຍຜ່ານການ ລົງທຶນເຂົ້າ ໃນການກໍ່ສ້າງ ແລະປັບປຸງລະບົບຊົນລະປະທານ, ການສົ່ງເສີມການຜະລິດທີ່ຫຼາກຫຼາຍ ແລະການ ເຊື່ອມໂຍງກັບຕະຫຼາດ ເພື່ອພັດທະນາເສດຖະກິດ-ສັງຄົມ, ປັບປຸງຊີວິດການເປັນຢູ່ຂອງທ້ອງຖິ່ນໃຫ້ ມີຄວາມຍືນຍົງ ແລະທົ່ວເຖິງ, ສ້າງລາຍໄດ້ ໃຫ້ ແກ່ຊາວກະສິກອນ ເພີ່ມຂຶ້ນຢ່າງຕໍ່ເນື່ອງເພື່ອກ້າວ ໄປເຖິງ ການຫຼຸດພົ້ນຈາກຄວາມທຸກຍາກ ເທື່ອລະ ກ້າວ. ໃນກອງປະຊຸມ ໄດ້ມີການ ພິຈາລະນາ ແລະ ຮັບຮອງ ບັນດາເນື້ອໃນສຳຄັນ ຄື: ຮັບຟັງການລາຍ ງານໂດຍສັງເຂບ ຂອງຄະນະຮັບຜິດຊອບໂຄງການ ຂັ້ນສູນກາງ ກ່ຽວກັບຄວາມ ຄືບໜ້າການຈັດຕັ້ງ ປະຕິບັດ, ສິ່ງທ້າທາຍ ແລະ ຂໍ້ສະເໜີ ເພື່ອປັບປຸງ ແກ້ໄຂໃນຕໍ່ໜ້າ ຂອງທັງ 02 ໂຄງການ ໂດຍຕິດພັນ









ກັບບັນດາໜ້າວຽກຫຼັກເຊັ່ນ: ການຜະລິດກະສິກຳໃຫ້ເປັນສິນຄ້າ ຕິດພັນກັບການສະໜັບສະໜູນທຶນໃຫ້ແກ່ກຸ່ມຜະລິດ ແລະທຸລະກິດກະສິກຳ; ການປົກປ້ອງລະບົບນິເວດໃນເຂດອ່າງໂຕ່ງ ຕິດພັນກັບການວາງແຜນນຳໃຊ້ທີ່ດິນ; ການປັບປຸງ ຊົນລະປະທານ ຕິດພັນກັບການສ້າງຕັ້ງກຸ່ມ ແລະສະມາຄົມກຸ່ມນຳໃຊ້ນ້ຳ; ການປັບປຸງດ້ານ ໂພຊະນາການ ແລະລະບົບສຸຂະພິບານ, ລວມທັງທິດທາງແຜນການ ປະຈຳປີ 2025 ແລະຍຸດທະສາດໂຄງການໃນຕໍ່ໜ້າ. ໃນກອງປະຊຸມ ຜູ້ເຂົ້າຮ່ວມໄດ້ຮັບຟັງການນຳສະເໜີ ຄວາມຄືບໜ້າໂດຍລວມຂອງການຈັດຕັ້ງປະຕິບັດໂຄງການປີ 2024 ແລະແຜນການປີ 2025 ຂອງ 2 ໂຄງການເຊິ່ງຈັດຕັ້ງປະຕິບັດ ຢູ່ 4 ຄື: ແຂວງຫລວງພະບາງ, ແຂວງໄຊຍະບູລີ, ແຂວງຫົວພັນ ແລະແຂວງຊຽງຂວາງ, ຈາກນັ້ນ ບັນດາຜູ້ເຂົ້າຮ່ວມ ໄດ້ພ້ອມກັນຄົ້ນຄວ້າປະກອບຄຳເຫັນ ເພື່ອເຮັດໃຫ້ ການຈັດຕັ້ງປະຕິບັດບັນດາກິດຈະກຳ 2 ໂຄງການ ສອດຄ່ອງຕາມການລົງທຶນຂອງລັດ ໄດ້ຮັບຜົນຕອບແທນຢ່າງມີຄຸນນະພາບ. ຕອນທ້າຍ ທ່ານ ປອ ລິນຄຳ ດວງສະຫວັນ ໄດ້ມີຄຳເຫັນໂອ້ລົມ ໂດຍເນັ້ນໃຫ້ຄະນະຮັບຜິດຊອບໂຄງການ ສືບຕໍ່ປະຕິບັດວຽກງານທີ່ກຳນົດໄວ້ ຕາມແຜນການ ແລະສົ່ງເສີມໃຫ້ປະຊາຊົນມີສ່ວນຮ່ວມ, ຈັດຕັ້ງປະຕິບັດບັນດາກິດຈະກຳ ໃຫ້ໄດ້ຮັບຜົນສຳເລັດ ເຂັ້ມແຂງ ແລະຍືນຍົງ.

ພາຍຫລັງສຳເລັດກອງປະຊຸມ ທ່ານລັດຖະມົນຕີກະຊວງກະສິກຳແລະປ່າໄມ້ພ້ອມດ້ວຍຄະນະຍັງໄດ້ເດີນທາງລົງໄປຢ້ຽມແລະເບິ່ງກິດຈະກຳຂອງກຸ່ມຜະລິດກະສິກຳກຸ່ມປູກພືດຜັກຂອງປະຊາຊົນບ້ານນາຊາວ, ນະຄອນຫລວງພະບາງ ທີ່ນອນໃນພື້ນທີ່ຊຸກຍູ້ສົ່ງເສີມຂອງໂຄງການຊົນລະກະເສດ ແລະການຜະລິດເປັນສິນຄ້າຂະໜາດນ້ອຍຕື່ມອີກ.


ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;